ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ເລກທີ..06.../ຈຂ,ຈສ.

ແຂວງຈຳປາສັກ; ວັນທີ..24.ສິງຫາ 2017.

# ຄຳສັ່ງແນະນຳ

ເຖິງ: ຄະນະອຳນວຍການໂຮງຈັກ-ໂຮງງານ ວິສະຫະກິດພາກລັດ ແລະ ເອກະຊົນ ທີ່ດຳເນີນທຸລະກິດ -ການບໍລິການ ຢູ່ໃນແຂວງຈຳປາສັກ.

ເລື່ອງ: ສ້າງຕັ້ງຕົວແທນຜູ້ອອກແຮງງານ ຫຼື ກຳມະບານຮາກຖານ ແລະ ປັບປຸງສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງຂອງກຳມະບານ.

- ອີງຕາມ ກົດໝາຍວ່າດ້ວຍກຳມະບານ ສະບັບເລກທີ 12/ສພຊ, ລົງວັນທີ 25/12/2007.
- ອີງຕາມ ກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24/12/2013.
- ອີງຕາມ ໜັງສືສະເໜີ ຂອງສະຫະພັນກຳມະບານ ສະບັບເລກທີ 621/ສກຂ, ລົງວັນທີ 18/08/2017.

ເພື່ອເປັນການເສີມສ້າງຂີດຄວາມສາມາດຂອງ ແຮງງານ ແລະ ເປັນການປົກປ້ອງສິດຂອງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ໃຫ້ມີຄວາມເປັນເອກະພາບກັນ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດທີ່ເທົ່າທຽມກັນ ບໍ່ວ່າຈະເປັນບັນດາໂຮງຈັກ-ໂຮງງານ, ວິສະຫະກິດພາກລັດ ແລະ ເອກະຊົນ ທີ່ດຳເນີນທຸລະກິດ - ການບໍລິການຢູ່ໃນແຂວງຈຳປາສັກ ໃຫ້ໄດ້ພ້ອມກັນຈັດຕັ້ງປະຕິບັດ ສ້າງຕັ້ງຕົວແທນຜູ້ອອກແຮງງານ ຫຼື ກຳມະບານຮາກຖານ ແລະ ປັບປຸງຄວາມເຂັ້ມແຂງໃຫ້ການຈັດຕັ້ງກຳມະບານ.

**ເຈົ້າແຂວງຈຳປາສັກ ຕົກລົງ:**

1. ໃຫ້ບັນດາໂຮງຈັກ - ໂຮງງານ, ວິສະຫະກິດພາກລັດ ແລະ ເອກະຊົນ ທີ່ດຳເນີນທຸລະກິດ - ການບໍລິການທົ່ວແຂວງ ໄດ້ຈັດຕັ້ງຕົວແທນຜູ້ອອກແຮງງານ ຫຼື ກຳມະບານຮາກຖານ ຂຶ້ນຢູ່ກັບຫົວໜ່ວຍແຮງງານຂອງຕົນ ຕາມກົດໝາຍວ່າດ້ວຍແຮງງານ ມາດຕາ 164 ວ່າດ້ວຍອົງການຕ່າງໜ້າຜູ້ອອກແຮງງານ.
2. ຫົວໜ່ວຍແຮງງານໄດ້ທີ່ມີການຈັດຕັ້ງກຳມະບານ ແລະ ຕົວແທນຜູ້ອອກແຮງງານແລ້ວ ໃຫ້ສ້າງສັນຍາແຮງງານລວມໝູ່, ສັນຍາບຸກຄົນ ຕາມກົດໝາຍວ່າດ້ວຍແຮງງານ ມາດຕາ 170 ວ່າດ້ວຍສັນຍາແຮງງານລວມໝູ່
3. ໃຫ້ບັນດາໂຮງຈັກ - ໂຮງງານ, ວິສະຫະກິດພາກລັດ ແລະ ເອກະຊົນ ທີ່ດຳເນີນທຸລະກິດ - ການບໍລິການທົ່ວແຂວງ ທີ່ມີການຈັດຕັ້ງກຳມະບານ ຫຼື ບໍ່ມີກໍ່ຕາມ ໃຫ້ຮັບຜິດຊອບຈັດຕັ້ງການ ຝຶກອົບຮົມໂຄສະນາຄວາມປອດໄພ - ຊີວະອະນາໄມ ຕາມກົດໝາຍວ່າດ້ວຍແຮງງານ ມາດຕາ 117 ວຽກງານທາງດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ.

4. ໃຫ້ບັນດາໂຮງຈັກ - ໂຮງງານ, ວິສະຫະກິດພາກລັດ ແລະ ເອກະຊົນ ທີ່ດຳເນີນທຸລະກິດ - ການບໍລິການຢູ່ໃນແຂວງ ຕ້ອງໄດ້ຂຶ້ນທະບຽນກຳມະກອນຂອງຕົນ ເພື່ອຮັບປະກັນການປົກປ້ອງແຮງງານ ແລະ ການຄຸ້ມຄອງແຮງງານ ຕາມກົດໝາຍວ່າດ້ວຍກຳມະບານ ມາດຕາ 11, ຂໍ້ທີ 2 ການຂຶ້ນທະບຽນຄຸ້ມຄອງສະມາຊິກກຳມະບານ ແລະ ກຳມະກອນ ຢູ່ບັນດາຫົວໜ່ວຍແຮງງານ ທັງພາຍໃນ ແລະ ຫົວໜ່ວຍແຮງງານຢູ່ຕ່າງປະເທດ.
5. ໃຫ້ອົງການຈັດຕັ້ງພາຄີ 3 ຝ່າຍເປັນໃຈກາງໃນການປະຕິບັດສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ: ສະຫະພັນກຳມະບານແຂວງ, ພະແນກແຮງງານ ແລະ ສະຫັວດດີການສັງຄົມແຂວງ ແລະ ສະພາການຄ້າ ແລະ ອຸດສະຫະກຳແຂວງ ເປັນຜູ້ນຳພາຮອບດ້ານໃນການຕິດຕາມ, ກວດກາ ແລະ ຊຸກຍູ້ໃຫ້ເປັນປົກກະຕິ.

ດັ່ງນັ້ນ; ຈຶ່ງໄດ້ອອກຄຳສັ່ງແນະນຳ ສະບັບນີ້ ມາຍັງຄະນະອຳນວຍການໂຮງຈັກ - ໂຮງງານ, ວິສະຫະກິດພາກລັດ ແລະ ເອກະຊົນ ທີ່ດຳເນີນທຸລະກິດ - ການບໍລິການທົ່ວແຂວງຈຳປາສັກ ຈຶ່ງໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ຢ່າງເຂັ້ມງວດ.

ຄຳສັ່ງແນະນຳສະບັບນີ້ໃຊ້ປ່ຽນແທນ ຄຳສັ່ງແນະນຳ ສະບັບເລກທີ: 07/ຈຂ,ຈສ. ລົງວັນທີ: 19/03/2015 ແລະ ມີຜົນສັກສິດ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ປອ. ບຸນທອງ ດີວີໄຊ